ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ປັບປຸງກົດໝາຍການຄຸ້ມຄອງເງິນຕາຕ່າງປະເທດ




ມື້ນີ້ (28 ມິຖຸນາ 2022); ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ນໍາສະເໜີຮ່າງກົດໝາຍ (ສະບັບປັບປຸງ) ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດຕໍ່ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດຊຸດທີ IX ຊຶ່ງການປັບປຸງກົດໝາຍຄັ້ງນີ້ ເພື່ອເປັນເຄື່ອງມືໃນການຄຸ້ມຄອງເງິນຕາຕ່າງປະເທດຢູ່ ສປປ ລາວ ໃຫ້ມີປະສິດທິຜົນຫຼາຍຂຶ້ນໃນເງື່ອນໄຂທີ່ຮູບແບບການເຊື່ອມໂຍງດ້ານເສດຖະກິດ-ການເງິນລະຫວ່າງປະເທດ ນັບມື້ນັບເປີດກວ້າງ ແລະ ສະຫຼັບສັບຊ້ອນ; ໃຫ້ສາມາດຄຸ້ມຄອງເງິນຕາຕ່າງປະເທດໄດ້ລວມສູນ ເຂົ້າສູ່ລະບົບຫຼາຍຂຶ້ນ, ສ້າງປະໂຫຍດສູງສຸດໃຫ້ແກ່ປະເທດຊາດໃຫ້ແກ່ປະຊາຊົນ; ຫຼຸດຜ່ອນການນໍາໃຊ້ເງິນຕາຕ່າງປະເທດໃນສັງຄົມລົງ ແລະ ປະກອບສ່ວນສ້າງຄວາມເຂັ້ມແຂງໃຫ້ຖານະການຊໍາລະກັບຕ່າງປະເທດຂອງ ສປປ ລາວ ດີຂຶ້ນ.

ການປັບປຸງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດໃນຄັ້ງນີ້ກໍ່ເພື່ອເຮັດໃຫ້ການເຄື່ອນໄຫວດ້ານເງິນຕາຕ່າງປະເທດຢູ່ ສປປ ລາວ ໄດ້ຮັບການຄຸ້ມຄອງສອດຄ່ອງກັບເງື່ອນໄຂເສດຖະກິດຢ່າງເປັນລະບົບຫຼາຍຂຶ້ນ. ໃນໄລຍະຜ່ານມາ ລັດຖະບັນຍັດວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ສະບັບເລກທີ 01/ສປປ, ລົງວັນທີ 9 ສິງຫາ 2002 ແລະ ສະບັບເລກທີ 01/ປປທ, ລົງວັນທີ 17 ມີນາ 2008 ທີ່ມີພື້ນຖານມາຈາກດໍາລັດຂອງສະພາລັດຖະມົນຕີວ່າດ້ວຍການຄຸ້ມຄອງຈໍລະຈອນເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ສະບັບເລກທີ 53/ປສລ, ລົງວັນທີ 7 ກັນຍາ 1990 ຈຶ່ງໄດ້ຖືກຍົກຂຶ້ນເປັນກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດໃນປີ 2014 ເພື່ອຕອບສະໜອງກັບເງື່ອນໄຂທີ່ ສປປ ລາວ ມີການເປີດກວ້າງການພົວພັນດ້ານການຄ້າ, ການລົງທຶນກັບຕ່າງປະເທດຢ່າງຫຼວງຫຼາຍ, ມີກະແສເງິນຕາຕ່າງປະເທດຈໍລະຈອນໃນລະບົບເສດຖະກິດຫຼາຍຂຶ້ນ; ໄດ້ຮັບຮອງເອົາການຈັດຕັ້ງປະຕິບັດມາດຕາ 8 ຂອງກົດລະບຽບຂອງກອງທຶນສາກົນ ເພື່ອສ້າງເງື່ອນໄຂໃນການເຂົ້າເປັນສະມາຊິກຂອງອົງການການຄ້າໂລກ. ຄຽງຄູ່ກັບການສ້າງກົດໝາຍດັ່ງກ່າວ, ທຫລ ກໍ່ໄດ້ຜັນຂະຫຍາຍສ້າງເປັນນິຕິກໍາລຸ່ມກົດໝາຍກ່ຽວຂ້ອງຈໍານວນ 10 ສະບັບ.

ແຕ່ເຖິງຢ່າງໃດກໍຕາມ, ທຫລ ຈະມີການປັບປຸງກົດໝາຍສະບັບດັ່ງກ່າວ ແຕ່ການຄຸ້ມຄອງເງິນຕາຕ່າງປະເທດຢູ່ ສປປ ລາວ ຍັງປະເຊີນກັບຫຼາຍສິ່ງທ້າທາຍ ແລະ ຂໍ້ຫຍຸ້ງຍາກ ໂດຍສະເພາະໃນໄລຍະທີ່ແຫຼ່ງລາຍຮັບເປັນເງິນຕາຕ່າງປະເທດຂອງ ສປປ ລາວຫຼຸດລົງຫຼາຍ ບໍ່ສົມດຸນກັບລະດັບຄວາມຕ້ອງການເງິນຕາຕ່າງປະເທດໃນການຊໍາລະໃຫ້ຕ່າງປະເທດທີ່ຢູ່ໃນລະດັບສູງຕໍ່ເນື່ອງ, ສັງຄົມຍັງມີຄວາມຕ້ອງການຖືຄອງເງິນຕາຕ່າງປະເທດໄວ້ເພື່ອເປັນການສະສົມ ແລະ ເຮັດທຸລະກໍາສະສາງຕ່າງໆໃນສັງຄົມ. ສະນັ້ນ, ການຈະແກ້ໄຂບັນຫາທ້າທາຍດັ່ງກ່າວ ຈຶ່ງຮຽກຮ້ອງໃຫ້ທຸກຄົນໃນສັງຄົມໄດ້ປະກອບສ່ວນໃນການປະຕິບັດກົດໝາຍສະບັບດັ່ງກ່າວຢ່າງແທ້ຈິງ ຈຶ່ງຈະສາມາດແກ້ໄຂບັນຫາເຫຼົ່ານີ້ໃຫ້ນັບມື້ນັບຫຼຸດໜ້ອຍຖອຍລົງ ຈົນໝົດໄປໃນສັງຄົມ.

# ຂ່າວ: ຮັດສະໝີ ດວງສັດຈະ

**ຄົນລາວ ຮັກເມືອງລາວ ໃຊ້ເງິນກີບລາວ**